NSW GOVERNMENT

**Student behaviour**

**Parent/carer factsheet**

# ຄວາມປະພຶດຂອງນັກຮຽນ

## ເຈ້ຍຂໍ້ມູນສໍາລັບພໍ່ແມ່/ຜູ້ດູແລ

### ຄວາມປະພຶດ

ພວກເຮົາຕ້ອງການຮັບປະກັນໃຫ້ໂຮງຮຽນເປັນບ່ອນທີ່ປອດໄພ ແລະ ມີຄວາມສຸກສໍາລັບລູກຂອງທ່ານ. ການສະໜັບສະໜູນຄວາມປະພຶດຂອງນັກຮຽນເປັນສິ່ງສໍາຄັນໃນການສົ່ງເສີມການມີສ່ວນຮ່ວມແລະຍົກສູງການປະຕິບັດ ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນ. ໂຮງຮຽນມີຈຸດປະສົງທີ່ຈະສ້າງສະພາບແວດລ້ອມການຮຽນຮູ້ແບບມີສ່ວນຮວມທີ່ຮ່ວມມືກັນ, ສະໜັບສະໜຸນແລະໜຽວແໜ້ນ. ກົດບັດຊຸມຊົນໂຮງຮຽນ ໄດ້ອະທິບາຍວ່າອັນນີ້ມີລັກສະນະແນວໃດສໍາລັບ ພໍ່ແມ່, ຜູ້ດູແລ, ນັກການສຶກສາ ແລະ ພະນັກງານໂຮງຮຽນ.

### ຍຸດທະສາດການປະພຶດຂອງນັກຮຽນ

ຍຸດທະສາດການປະພຶດຂອງນັກຮຽນຂອງພວກເຮົາ (Student Behaviour Strategy) ຊ່ວຍສ້າງລະບົບການສຶກສາແບບຮຽນລວມທີ່ນັກຮຽນທຸກຄົນເປັນທີ່ຮູ້ຈັກ, ໃຫ້ຄຸນຄ່າ ແລະ ໄດ້ຮັບການເອົາໃຈໃສ່, ແລະ ນັກຮຽນທຸກຄົນສາມາດຮຽນຮູ້ໄດ້ຢ່າງເຕັມຄວາມສາມາດຂອງພວກເຂົາ. ພວກເຮົາຮູ້ວ່ານັກຮຽນທີ່ມີຄວາມຮູ້ສຶກວ່າໄດ້ຮັບການສະໜັບສະໜູນແລະຮູ້ສຶກປອດໄພ ແມ່ນມັກຈະເຊື່ອມຕໍ່ ເຂົາ. ພວກເຮົາຮູ້ວ່ານັກຮຽນທີ່ມີຄວາມຮູ້ສຶກວ່າໄດ້ຮັບການສະໜັບ ສະໜຸນ ແລະຄວາມປອດໄພແມ່ນມັກຈະເຊື່ອມຕໍ່ກັບໂຮງຮຽນແລະເປັນຜູ້ເຂົ້າຮ່ວມຢ່າງຫ້າວຫັນໃນການຮຽນຮູ້ຂອງພວກເຂົາຫຼາຍຂຶ້ນ.

ສະພາບແວດລ້ອມການຮຽນຮູ້ໃນທາງບວກ ແລະ ໃຫ້ກຽດ ສົ່ງເສີມຄວາມເປັນຢູ່ທີ່ດີ, ການມີສ່ວນຮ່ວມ ແລະປັບປຸງຜົນສໍາເລັດທາງການຮຽນທີ່ດີຂຶ້ນ. ຍຸດທະສາດນີ້ຂຶ້ນ. ຍຸດທະສາດສະໜັບສະໜຸນແນວທາງປ້ອງກັນ, ໃນທາງບວກ, ເນັ້ນນັກຮຽນເປັນສູນກາງ, ວິທີການແບບໂຮງຮຽນ-ຊຸມຊົນ-ຄອບຄົວເຊິ່ງຖືເອົາຄວາມສອດຄ່ອງເປັນກຸນແຈສໍາຄັນ. - ຄອບຄົວ - ຊຸມຊົນເຊິ່ງຄວາມສະໝໍ່າສະເໝີເປັນກຸນແຈສໍາຄັນ. ຄວາມຕ້ອງການຂອງນັກຮຽນທັງ ໝົດຈະໄດ້ຮັບການຕອບສະໜອງໄດ້ໂດຍລະບົບຊ່ວຍຫຼາຍແບບ ແຄຣ໌ ຄອນຕີນັມ (Care Continuum).

### ລະຫັດກົດລະບຽບຄວາມປະພຶດສໍາລັບນັກຮຽນ

ກົດລະຫັດບຽບຄວາມປະພຶດສໍາລັບນັກຮຽນ (Behaviour Code for Students) ອະທິບາຍເຖິງຄວາມປະພຶດຄາດຫວັງຢູ່ໃນໂຮງຮຽນຫຼວງຂອງ ຣັດ NSW ທັງໝົດ. ໂຮງຮຽນຂອງລູກທ່ານຍັງຈະພັດທະນາຄວາມຄາດຫວັງດ້ານຄວາມປະພຶດທີ່ຄາດວ່າຈະໃຫ້ປະຕິບັດຈະຢູ່ໃນໂຮງຮຽນຂອງພວກເຂົາ. ພະນັກງານຢູ່ໃນໂຮງຮຽນຂອງລູກທ່ານຈະສອນ ແລະ ຮັບຮູ້ຄວາມປະພຶດທີ່ຄາດຫວັງໄວ້.

### ຄວາມປະພຶດອັນເປັນທີ່ກັງວົນ

ບັນດາເດັກ ແລະ ໄວໜຸ່ມສາວສາມາດສະແດງຄວາມປະພຶດທີ່ສ້າງຄວາມຫຍຸ້ງຍາກໃນບາງຄັ້ງທີ່ເຊິ່ງເປັນສ່ວນໜຶ່ງຂອງການເຕີບໂຕ. ລູກໂຕ. ລູກຂອງທ່ານອາດຈະໄດ້ຮັບຜົນກະທົບຈາກຄວາມປະພຶດຂອງຄົນອື່ນຫຼືສົ່ງຜົນກະທົບຕໍ່ຄົນອື່ນໂດຍຄວາມປະພຶດຂອງພວກເຂົາ. ຂໍ້ມູນເພີ່ມເຕີມເຂົາ. ຂໍ້ມູນເພີ່ມເຕີມກ່ຽວກັບ ສິ່ງທີ່ຕ້ອງເຮັດຖ້າລູກຂອງທ່ານບອກທ່ານກ່ຽວກັບບັນຫາດ້ານຄວາມປະພຶດຢູ່ໃນໂຮງຮຽນ ແມ່ນມີຢູ່ໃນເວັບໄຊທ໌.

### ຂໍ້ມູນເພີ້ມເຕີມ

ຖ້າທ່ານຕ້ອງການຮູ້ເພີ່ມເຕີມກ່ຽວກັບການສະ ໜັບສະໜຸນຄວາມປະພຶດຫຼື ມີຄວາມກັງວົນໃດໆກ່ຽວກັບຄວາມປະພຶດຂອງລູກຂອງທ່ານ, ກະລຸນາຕິດຕໍ່ໂຮງຮຽນ.

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າ ທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.